ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0262 /ອຄ.ກຄພນ.

ນະຄອນຫລວງວຽງຈັນ, ວັນທີ 07 ມີນາ 2018.

# ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ.

ເລື່ອງ: ປັບລົງລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ເລກທີ 70/ສພຊ, ລົງວັນທີ 15/12/2015.
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 324/ຫລບ.ກລຂ, ລົງວັນທີ 4/3/2016.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 636/ຫສນຍ.ກສສ, ລົງວັນທີ 5/5/2016.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 684/ຫສນຍ.ກລຂ, ລົງວັນທີ 17/5/2016.
- ອີງຕາມ ສະພາບລາຄາຊື້-ຂາຍນ້ຳມັນເຊື້ອໄຟຢູ່ຕະຫລາດໂລກໃນປະຈຸບັນໄດ້ມີການປ່ຽນແປງ ແລະ ເພື່ອໃຫ້ສອດຄ່ອງກັບກົນໄກຕະຫລາດ.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້ປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟເຂດເທດສະບານແຂວງ, ນະຄອນຫລວງ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫລວງວຽງຈັນ | 10,110 | 9,020 | 8,000 |
| 2 | ແຂວງຜົ້ງສາລີ | - | 9,780 | 8,760 |
| 3 | ແຂວງຫລວງນ້ຳທາ | - | 9,380 | 8,360 |
| 4 | ແຂວງອຸດົມໄຊ | 10,590 | 9,500 | 8,480 |
| 5 | ແຂວງບໍ່ແກ້ວ | 10,210 | 9,120 | 8,100 |
| 6 | ແຂວງຫລວງພະບາງ | 10,570 | 9,480 | 8,460 |
| 7 | ແຂວງໄຊຍະບູລີ | - | 9,420 | 8,400 |
| 8 | ແຂວງຫົວພັນ | - | 9,420 | 8,400 |
| 9 | ແຂວງຊຽງຂວາງ | - | 9,210 | 8,190 |
| 10 | ແຂວງວຽງຈັນ | 10,110 | 9,020 | 8,000 |
| 11 | ແຂວງບໍລິຄຳໄຊ | 10,190 | 9,100 | 8,080 |
| 12 | ແຂວງຄຳມ່ວນ | 10,140 | 9,050 | 8,030 |
| 13 | ແຂວງສະຫວັນນະເຂດ | 10,140 | 9,050 | 8,030 |
| 14 | ແຂວງສາລະວັນ | - | 9,230 | 8,210 |
| 15 | ແຂວງຈຳປາສັກ | 10,170 | 9,080 | 8,060 |
| 16 | ແຂວງເຊກອງ | - | 9,260 | 8,240 |
| 17 | ແຂວງອັດຕະປື | 10,350 | 9,260 | 8,240 |
| 18 | ແຂວງໄຊສົມບູນ | - | 9,260 | 8,240 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 08/03/2018 ເວລາ 06 : 00 ໂມງ ໃນຂອບເຂດທົ່ວປະເທດ;
- ການປັບລາຄາຄັ້ງນີ້ ແມ່ນໄດ້ປັບລາຄານ້ຳມັນແອັດຊັງພິເສດ, ນ້ຳມັນແອັດຊັງທຳມະດາ ແລະ ນ້ຳມັນກາຊວນ ລົງ 100 ກີບ/ລິດ;
- ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນ ຂ້າງເທິງນີ້ ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ;
- ການຄິດໄລ່ເສຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ໃນໂຄງສ້າງ ລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0295/ກຄພງ.ກຊ, ລົງວັນທີ 07/03/2018 ຈົນກວ່າຈະມີການປ່ຽນແປງ;
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 0171/ອຄ.ກຄພນ, ລົງວັນທີ 12 ກຸມພາ 2018.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ລ. ທ. ລັດຖະມົນຕີ

ສົມຈິດ ອິນທະມິດ

<u>ບ່ອນສົ່ງ</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ)
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ)
- ຫ້ອງການ ກະຊວງການເງິນ (ເພື່ອຊາບ)
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ)
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື)
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ)